ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

ເລກທີ 04 /ບສລມ
ນະຄອນຫຼວງວຽງຈັນ, ວັນທີ 09 JAN 2024

ແຈ້ງການປະມູນ

ເຖິງ : ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ.
ເລື່ອງ: ການປະມູນຊຸ້ບສົມບັດ ຂອງໂຮງງານຊີມັງວັງວຽງຫຼັງ II ບຸ່ທີ່ເມືອງວັງວຽງ, ແຂວງວຽງຈັນ

- ອີງຕາມ ແຜນປັບປຸງ-ຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ ຂອງຄະນະຮັບຜິດຊອບ 1731, ສະບັບລົງວັນທີ 30 ທັນວາ 2021;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງປ້ອງກັນປະເທດ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະເມີນ ແລະ ສະສາງຊຸ້ບສົມບັດ ໂຮງງານຊີມັງວັງວຽງຫຼັງ II, ສະບັບເລກທີ 5401/ກປທ, ລົງວັນທີ 16 ຕຸລາ 2023.

ບໍລິສັດ ຊີມັງລາວ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ຊາບວ່າ: ປັດຈຸບັນມີຈຸດປະສົງຈະສະສາງຊຸ້ບສົມບັດເກົ່າແກ່ ປະເພດເຄື່ອງຈັກ ຂອງໂຮງງານຊີມັງວັງວຽງຫຼັງ II ບຸ່ທີ່ ເມືອງວັງວຽງ, ແຂວງວຽງຈັນ, ທີ່ຂຶ້ນກັບລັດວິສາຫະກິດ ພັດທະນາອຸດສະຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (ພ.ກ.ອ) ດ້ວຍຮູບການປະມູນຂາຍແບບເປີດກວ້າງ. ສະນັ້ນ, ຫາກທ່ານໃດມີຄວາມສົນໃຈຢາກເຂົ້າຮ່ວມການປະມູນ ແຂ່ງຂັນລາຄາ ສາມາດຕິດຕໍ່ຂໍລາຍລະອຽດເພີ່ມເຕີມ ແລະ ຊື້ຊອງປະມູນໄດ້ທີ່ ບໍລິສັດ ຊີມັງລາວ ມະຫາຊົນ, ສຳນັກ ງານຕັ້ງຢູ່ບ້ານຫນອງບອນ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ການຂາຍຊອງປະມູນ ແມ່ນເລີ່ມແຕ່ວັນທີ 09 / 01 / 2024 ຫາ 24 / 01 / 2024 (ໃນວັນ ແລະ ເວລາລັດຖະການ), ສຳລັບການເປີດຊອງປະມູນ ແມ່ນຈະໄດ້ຈັດຂຶ້ນໃນວັນທີ. 25 / 01 / 2024 ທີ່ສຳນັກງານໃຫຍ່ ລັດວິສາຫະກິດ ພ.ກ.ອ ສະຖານທີ່ສຳນັກ ງານບ້ານ ສີໄຄທົ່ງ, ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

ໝາຍເຫດ:

- ຜູ້ທີ່ຊື້ຊອງເຂົ້າຮ່ວມການປະມູນ ຕ້ອງມີໃບຢັ້ງຢືນທະບຽນວິສາຫະກິດ ແລະ ສາມາດໄປເບິ່ງຊຸ້ບສົມບັດຕົວຈິງ ໄດ້ ທີ່ໂຮງງານຊີມັງວັງວຽງຫຼັງ II ບຸ່ທີ່ເມືອງວັງວຽງ, ແຂວງວຽງຈັນ;
- ລາຄາຂາຍ ຊອງປະມູນ ເປັນມູນຄ່າ 500.000 ກີບ ຕໍ່ 1 ຊຸ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນເພື່ອຊາບ.

ຜູ້ອຳນວຍການ

ບໍລິສັດ ຊີມັງລາວ ມະຫາຊົນ
Lao Cement Public Company

ເນ້ຍເຫຼັຽ

ສອບຖາມຂໍ້ມູນເພີ່ມເຕີມຕິດຕໍ່ພົວພັນ: ທ່ານ ເລີນສັກ ວົງຈັນຄຳ: 020 5567 6609
ທ່ານ ຈາງຈິນຫົວ: 020 9295 0352